ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກກະສິກຳ ແລະ ສິ່ງແວດລ້ອມ

5329 - - -ລ

ເລກທີ______/ກສ.ນວ

ວັນທີ 09 JUL 2026

# ໜັງສືແຈ້ງເຊີນປະມູນ

1. ຂະແໜງປ່າໄມ້ (ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ) ຕາງໜ້າຄະນະຮັບຜິດຊອບກະກຽມການປະມູນ, ຂໍເຊີນບັນດາບໍລິສັດ ທີ່ມີຄຸນວຸດທິເໝາະສົມ ທີ່ສົນໃຈເຂົ້າຍື່ນຊອງປະມູນ ສຳລັບໂຄງການກໍ່ສ້າງຫ້ອງການກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ຕາມໜ້າວຽກ, ແຜນຜັງເຕັກນິກ ແລະ ເງື່ອນໄຂ ທີ່ກຳນົດໄວ້ໃນເອກະສານການປະມູນ, ຊຶ່ງບໍລິສັດແມ່ນຕ້ອງມີຄວາມສາມາດໃນການໃນການລົງທຶນກ່ອນ ແລະ ເຈົ້າຂອງໂຄງການແມ່ນຈະຊຳລະດ້ວຍເງິນງົບປະມານຂອງລັດ ທີ່ໄດ້ຮັບອະນຸມັດຕາມລະບຽບຫຼັກການ, ກຳນົດເວລາກໍ່ສ້າງແມ່ນ 01 ປີ, ໃຫ້ສຳເລັດ ແລະ ມອບ-ຮັບ ໂຄງການ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນຄັ້ງນີ້ ແມ່ນອະນຸຍາດໃຫ້ທຸກບໍລິສັດທີ່ມີຄຸນວຸດທິເໝາະສົມ ທີ່ສົນໃຈເຂົ້າຮ່ວມແຂ່ງຂັນການປະມູນ, ສາມາດຕິດຕໍ່ພົວພັນໄດ້ທີ່: ຂະແໜງປ່າໄມ້ (ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ) ເບີໂທລະສັບຕິດຕໍ່ 020 5555 4657;
4. ເອກະສານປະມູນເລີ່ມຂາຍໃນວັນທີ 06 ກໍລະກົດ 2026 ຫາວັນທີ 12 ສິງຫາ 2026 ໃນລາຄາ 5,000,000 ກີບ ຕໍ່ໜຶ່ງຊອງປະມູນ ວິທີຊຳລະເປັນເງິນສົດ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ໂດຍຈະໄດ້ນຳໃຊ້ເຂົ້າໃນວຽກງານການປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 9:00 ໂມງ, ຂອງວັນທີ 12 ສິງຫາ 2026, ຊອງປະມູນທຸກຊອງແມ່ນຈະໄດ້ເປີດໃນວັນທີ 12 ສິງຫາ 2026, ເວລາ 9:00 ໂມງ ທີ່ຫ້ອງປະຊຸມໃຫຍ່ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ (ສຳນັກງານ 1 ບ້ານໜອງໄຮ, ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ) ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ; ຫາກຊອງປະມູນໃດສົ່ງຊ້າກວ່າເວລາກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ;

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ເພື່ອເຂົ້າຮ່ວມໃນການປະມູນໂຄງການດັ່ງກ່າວ ຕາມທາງຄວນດ້ວຍ.

ຫົວໜ້າພະແນກ

ພະແນກ ກະສິກຳ ແລະ ສິ່ງແວດລ້ອມ

ນະຄອນຫຼວງວຽງຈັນ

ຄຳພຸດ ສຸດາວັນ

Scanned with CamScanner